ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 1066 /ກງ

ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2019

# ແຈ້ງການເພີ່ມເຕີມ

**ຮຽນ :** - ທ່ານເຈົ້າຄອງນະຄອນຫລວງວຽງຈັນ, ບັນດາທ່ານເຈົ້າແຂວງ;

- ທ່ານເຈົ້ານະຄອນ, ບັນດາທ່ານເຈົ້າເມືອງ ແລະເທດສະບານ ໃນຂອບເຂດທົ່ວປະເທດ;
- ຫົວໜ້າພະແນກການເງິນ ນະຄອນຫລວງ, ບັນດາແຂວງ;
- ຫົວໜ້າຄັງເງິນແຫ່ງຊາດປະຈຳ ນະຄອນຫລວງ, ແຂວງ;
- ຫົວໜ້າສ່ວຍສາອາກອນປະຈຳ ນະຄອນຫລວງ, ແຂວງ;
- ຫົວໜ້າສ່ວຍສາອາກອນປະຈຳ ນະຄອນ, ເມືອງ ແລະເທດສະບານ.

**ເລື່ອງ :** ການຊຳລະພາສີທີ່ດິນປະຈຳປີ 2019

- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 01/ສປປ, ລົງວັນທີ 8 ພຶດສະພາ 2007 ວ່າດ້ວຍພາສີທີ່ດິນ;
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍພາສີທີ່ດິນ ສະບັບເລກທີ 1927/ກງ, ລົງວັນທີ 17 ສິງຫາ 2007;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ຄຳແນະນຳເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດການເກັບພາສີທີ່ດິນຜ່ານລະບົບທະນາຄານ ສະບັບເລກທີ 3909/ກງ, ລົງວັນທີ 04 ທັນວາ 2018;
- ອີງຕາມ ແຈ້ງການຂອງກະຊວງການເງິນ ສະບັບເລກທີ 0014/ກງ, ລົງວັນທີ 02 ມັງກອນ 2019.

ໃນໄລຍະຜ່ານມາ ກະຊວງການເງິນ ໄດ້ອອກຄຳແນະນຳເພີ່ມເຕີມ ແລະແຈ້ງການຕ່າງໆ ກ່ຽວກັບການເສຍພາສີທີ່ດິນຜ່ານລະບົບທະນາຄານ ເພື່ອແນະນຳການຈັດຕັ້ງປະຕິບັດການເກັບພາສີທີ່ດິນ ປະຈຳປີ 2019 ແລະເຮັດໃຫ້ການຈັດຕັ້ງປະຕິບັດມີຄວາມເປັນເອກະພາບດີສົມຄວນ ແຕ່ຄຽງຄູ່ກັນນັ້ນ ຄວາມເຂົ້າໃຈໃນການຈັດຕັ້ງປະຕິບັດຍັງມີຄວາມສັບສົນ ລະຫວ່າງ ການຈັດຕັ້ງປະຕິບັດການເສຍພາສີທີ່ດິນທີ່ເຄີຍປະຕິບັດຜ່ານມາ ແລະການເສຍພາສີທີ່ດິນຜ່ານລະບົບທະນາຄານ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດການເກັບລາຍຮັບພາສີທີ່ດິນປະຈຳປີ ໃຫ້ຖືກຕ້ອງ, ສອດຄ່ອງ ແລະເປັນເອກະພາບ.

ກະຊວງການເງິນ ອອກແຈ້ງການເພີ່ມເຕີມດັ່ງນີ້ :

1. ການຊຳລະພາສີທີ່ດິນ ປະຈຳປີ 2019 ແມ່ນໃຫ້ປະຕິບັດດ້ວຍສອງວິທີ ຄື: ຊຳລະຜ່ານຫ້ອງການບ້ານ ຫລື ຫ້ອງການສ່ວຍສາອາກອນ ປະຈຳເມືອງ ບ່ອນທີ່ດິນຕັ້ງຢູ່ (ແບບເກົ່າທີ່ເຄີຍປະຕິບັດຜ່ານມາ)

ແລະຊຳລະຜ່ານລະບົບທະນາຄານ ຕາມແຈ້ງການ ສະບັບເລກທີ 0014/ກງ, ລົງວັນທີ 02 ມັງກອນ 2019;

2. ສຳລັບບ້ານທີ່ບໍ່ມີເງື່ອນໄຂໃນການຊຳລະຜ່ານລະບົບທະນາຄານ ( ບ້ານທີ່ຢູ່ຫ່າງໄກສອກຫລີກ ແລະບໍ່ມີສາຂາ ຫລື ຕົວແທນຂອງທະນາຄານ ) ແມ່ນໃຫ້ຊຳລະພາສີທີ່ດິນຜ່ານຫ້ອງການບ້ານ ທີ່ເຄີຍປະຕິບັດຜ່ານມາ, ມອບເງິນເຂົ້າງົບປະມານທັງໝົດໂດຍຜ່ານຄັງເງິນແຫ່ງຊາດ ປະຈຳເມືອງ.

ການຊຳລະພາສີທີ່ດິນຜ່ານຫ້ອງການບ້ານດ້ວຍເງິນສົດ ແມ່ນໃຫ້ນາຍບ້ານສັງລວມຂໍ້ມູນຂອງຕອນດິນເຂົ້າໃສ່ຕາຕະລາງທີ່ໄດ້ກຳນົດໃຫ້ ແລະຈຳນວນເງິນເກັບພາສີທີ່ດິນ ແລ້ວສົ່ງໃຫ້ຫ້ອງການສ່ວຍສາອາກອນ ປະຈຳເມືອງ ເພື່ອສັງລວມລາຍຮັບເປັນຂໍ້ມູນສົມທຽບລາຍຮັບ ແລະເພື່ອສັງລວມຂໍ້ມູນຕອນດິນໃຫ້ບັນດາສາຂາຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ບັນທຶກເຂົ້າໃນຖານຂໍ້ມູນການເກັບລາຍຮັບພາສີທີ່ດິນ ຢ່າງຄົບຖ້ວນ.

3. ສຳລັບຜູ້ມີຄວາມພ້ອມ ຫລື ສະດວກ ໃນການຊຳລະຜ່ານຊ່ອງທາງຕ່າງໆ ( ຜ່ານປ່ອງບໍລິການຂອງທະນາຄານ, ຜ່ານມືຖື, ຜ່ານຕູ້ ATM, ຜ່ານຕູ້ຄີອອດ ແລະຜ່ານບັນດາສາຂາທະນາຄານຕ່າງໆ ) ແມ່ນໃຫ້ດຳເນີນການຊຳລະຜ່ານລະບົບທະນາຄານໄດ້ເລີຍ;

4. ການເບີກຈ່າຍເງິນບຳເນັດຈາກການເກັບພາສີທີ່ດິນ ໃຫ້ປະຕິບັດດັ່ງນີ້ :

- ໃນກໍລະນີຫາກບ້ານໃດທີ່ໄດ້ຫັກເງິນບຳເນັດໄວ້ກ່ອນນັ້ນ ແມ່ນໃຫ້ຄັງເງິນແຫ່ງຊາດປະຈຳເມືອງປະຕິບັດການຈັດຮັບ-ຈັດຈ່າຍ ຈຳນວນທີ່ໄດ້ຫັກແລ້ວນັ້ນ ໃຫ້ຖືກຕ້ອງຕາມລະບຽບ ແລະກົດໝາຍໄດ້ກຳນົດໄວ້.
- ສຳລັບບ້ານທີ່ຢູ່ຫ່າງໄກສອກຫລີກ ແລະບໍ່ມີສາຂາ ຫລື ຕົວແທນຂອງທະນາຄານ ແມ່ນໃຫ້ດຳເນີນການຖອນເງິນບຳເນັດ ດ້ວຍວິທີການຈັດຮັບ-ຈັດຈ່າຍ ໃນເວລາດຽວກັນກັບ ເວລາມອບເງິນໃຫ້ຄັງເງິນແຫ່ງຊາດປະຈຳເມືອງ ( ໝາຍວ່າມອບເງິນເຂົ້າທັງໝົດ ແລ້ວຈຶ່ງຖອນເງິນບຳເນັດທີ່ຈະໄດ້ຮັບໃນເວລາດຽວກັນ );
- ສຳລັບບ້ານທີ່ມີສາຂາ ຫລື ຕົວແທນຂອງທະນາຄານ ແມ່ນໃຫ້ມອບເງິນພາສີທີ່ດິນທີ່ເກັບໄດ້ທັງໝົດເຂົ້າທະນາຄານກ່ອນ ພາຍຫລັງແຂວງອ່ວາຍລາຍຮັບພາສີທີ່ດິນ ໃຫ້ເປັນລາຍຮັບຂອງເມືອງແລ້ວ ແມ່ນໃຫ້ປະຕິບັດການແບ່ງປັນເງິນບຳເນັດ ດ້ວຍວິທີການຖອນຈຳນວນເງິນດັ່ງກ່າວນຳຄັງເງິນແຫ່ງຊາດປະຈຳເມືອງ ທີ່ບ້ານຂຶ້ນກັບ;

5. ມອບໃຫ້ຄັງເງິນແຫ່ງຊາດປະຈຳນະຄອນຫລວງ, ບັນດາແຂວງ ເອົາໃຈໃສ່ຕິດຕາມລາຍຮັບພາສີທີ່ດິນໃຫ້ເຂົ້າເປັນລາຍຮັບງົບປະມານໃນແຕ່ລະວັນ, ອ່ວາຍລາຍຮັບດັ່ງກ່າວໃຫ້ແຕ່ລະເມືອງເປັນແຕ່ລະເດືອນ ແລະສົ່ງມອບລາຍຮັບຈາກການປັບໃໝເປັນແຕ່ລະງວດ.

ດັ່ງນັ້ນ, ກະຊວງການເງິນ ຈຶ່ງອອກແຈ້ງການສະບັບນີ້ ໃຫ້ນະຄອນຫລວງວຽງຈັນ, ບັນດາແຂວງ, ເມືອງ, ເທດສະບານ, ນະຄອນ, ຂະແໜງການເງິນ ປະຈຳທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ, ໃນກໍລະນີມີບັນຫາໃດທີ່ຍັງບໍ່ທັນຊັດເຈນ ແມ່ນໃຫ້ລາຍງານຄືນກະຊວງການເງິນ ເພື່ອສືບຕໍ່ປັບປຸງ ແລະແກ້ໄຂ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີ ກະຊວງການເງິນ**

ບຸນໂຈມ ອຸບົນປະເສີດ

15/5/2019